ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະຫະພັນກຳມະບານ
ກະຊວງໂຍທາທິການແລະ ຂົນສົ່ງ ເລກທີ /ສບ.ກຊ
ນະຄອນຫຼວງວຽງຈັນ, ວັນທີ

**ເປີດຂະບວນການແຂ່ງຂັນຈັດຕັ້ງປະຕິບັດ**
**ທິດທາງແຜນການ ຂອງ ກອງປະຊຸມ ໂຍທາທິການ ແລະ ຂົນສົ່ງ ທົ່ວປະເທດ**
**ປີ 2010-2011.**

- ອີງຕາມເນື້ອໃນຂໍ້ແຂ່ງຂັນ 2 ດີ 5 ເປັນເຈົ້າ ຂອງ ປະທານສູນກາງສະຫະພັນກຳມະບານລາວ, ສະບັບເລກທີ 0038/ສກລ, ລົງວັນທີ 13 ມັງກອນ 2010.
- ອີງຕາມພາລະບົດບາດ,ສິດ ໜ້າທີ່ ຂອງ ສະຫະພັນກຳມະບານກະຊວງ ຍທຂ , ທີ່ເປັນຕົວແທນ ປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທຳໃຫ້ແກ່ສະມາຊິກກຳມະບານ, ລັດຖະກອນ, ກຳມະກອນ ແລະ ຊາວຜູ້ອອກແຮງງານ ໃນຂົງເຂດວຽກງານ ຂະແໜງການ ຍທຂ.
- ອີງຕາມ ການຄົ້ນຄ້ວາ ແລະ ເຫັນດີເປັນເອກະພາບ ຂອງ ຄະນະນຳ ກະຊວງ ຍທຂ.

**ສະຫະພັນກຳມະບານ ກະຊວງ ຍທຂ ເປີດຂະບວນການແຂ່ງຂັນ ດັ່ງມີເນື້ອໃນລຸ່ມນີ້:**

**I.ຈຸດປະສົງ ລະດັບຄາດໝາຍ:**

1. ເພື່ອສືບຕໍ່ຜັນຂະຫຍາຍ ເນື້ອໃນມະຕິກອງປະຊຸມໃຫຍ່ຄັ້ງທີ II ຂອງອົງຄະນະພັກກະຊວງ ຍທຂ, ທິດທາງ ແຜນການ ກອງ ປະຊຸມ ຍທຂ ທົ່ວປະເທດ ປະຈຳ ປີ 2010-2011 ວາງອອກ ເຂົ້າສູ່ວຽກງານ ຕົວຈິງ ໃຫ້ມີຜົນສຳເລັດ, ລື່ນຄາດໝາຍ ມີຂະບວນການຟົດຟື້ນ .

2. ເພື່ອສຶກສາ ອົບຮົມ ສະມາຊິກກຳມະບານ, ລັດຖະກອນ, ກຳມະກອນ ໃຫ້ເຂົ້າໃຈ ເຊື່ອມຊຶມ ແນວທາງ ແຜນນະໂຍບາຍ ຂອງ ພັກ-ລັດ. ສ້າງສະຕິເປັນເຈົ້າ, ເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງ ດ້ວຍຕົນເອງ ແລະ ຍາດແຍ່ງເອົາການຊ່ວຍເຫຼືອ ຈາກເພື່ອນມິດ-ສາກົນໃຫ້ມີປະສິດທິຜົນສູງ.

3. ເພື່ອສ້າງຜົນງານ ຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ, ວັນສຳຄັນປະຫວັດສາດ ຂອງຊາດໃຫ້ເປັນຂະບວນການຟົດຟື້ນຕໍ່ເໜື່ອງ, ຕິດພັນກັບ ຂະບວນການແຂ່ງຂັນ-ຍ້ອງຍໍແລະ ການສົ່ງເສີມວຽກດີ ຄົນເດັ່ນ, ເພື່ອເປັນພື້ນຖານ ໃຫ້ແກ່ການເລືອກເຟັ້ນ,ບຳລຸງ, ກໍ່ສ້າງກາຍເປັນພະນັກງານນຳພາ.

4. ເພື່ອປັບປຸງ ແລະ ຂະຫຍາຍການຈັດຕັ້ງກຳມະບານ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ ປອດໃສ, ເປັນຕົວແທນ ປົກປ້ອງສິດ ຜົນປະໂຫຍດ ຂອງພະນັກງານ, ລັດຖະກອນ, ກຳມະກອນ ຢ່າງແທ້ຈິງ .

**II. ດ້ານເນື້ອໃນແຕ່ລະວຽກທີ່ຕ້ອງດຳເນີນ :**

**ກ/ ວຽກງານໂຄສະນາ ສຶກສາ ອົບຮົມການເມືອງ-ແນວຄິດ**

1. ສະມາຊິກກຳມະບານ, ລັດຖະກອນ, ກຳມະກອນ ຕ້ອງເຂົ້າຮ່ວມຄົ້ນຄ້ວາ, ເຊື່ອມຊຶມ ແນວທາງ ແຜນນະໂຍບາຍ, ລະບຽບ,ກົດໝາຍຂອງພັກ-ລັດ, ຂອງກຳມະບານ ທີ່ຄະນະນຳ ຂັ້ນຕ່າງໆ ຈັດຂຶ້ນ ໃຫ້ທົ່ວເຖິງໃຫ້ມີຜູ້ເຂົ້າຮ່ວມບໍ່ຫຼຸດ 90 % .

2. ທຸກໆຮາກຖານ ຕ້ອງຈັດຕັ້ງຄົ້ນຄ້ວາ ຮ່ຳຮຽນມະຕິຄຳສັ່ງ, ລະບຽບກົດໝາຍຂອງພັກ-ລັດ,ເອກະສານມູນເຊື້ອຂອງຊາດ, ແລະ ກົດໝາຍກຳມະບານ ໃຫ້ສະມາຊິກ ຂອງ ຕົນໃຫ້ທົ່ວເຖິງໃຫ້ມີຜູ້ເຂົ້າຮ່ວມ 88 % ຂຶ້ນໄປ.

3. ທຸກຫົວໜ່ວຍ ຮາກຖານເຂົ້າຮ່ວມດຳເນີນຊີວິດ, ຕີລາຄາສະມາຊິກຂັ້ນຂອງຕົນ ເປັນຕົ້ນ ຂັ້ນກະຊວງ 6 ເດືອນຕໍ່ຄັ້ງ, ຂັ້ນຮາກຖານ 3 ເດືອນຕໍ່ຄັ້ງ, ຂັ້ນຈຸໜ່ວຍເດືອນລະຄັ້ງ, ຕີລາຄາແບ່ງປະເພດ ສະມາຊິກ ປີລະຄັ້ງ,ປະຕິບັດລະບອບ ສ່ອງແສງທຸກເດືອນ, ປະກອບສ່ວນຢ່າງຕັ້ງໜ້າກໍ່ສ້າງໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານ ຂັ້ນ ຂອງຕົນ.

**ຂ/ ວຽກງານປັບປຸງ ແລະ ຂະຫຍາຍການຈັດຕັ້ງ**:

1. ກົມ ກອງ ທີ່ມີພະນັກງານ10 ຄົນ ຂຶ້ນໄປ ຕ້ອງສ້າງຕັ້ງໜ່ວຍກຳມະບານ ໃຫ້ໄດ້100%.

2. ທຸກຮາກຖານ ຕ້ອງສູ້ຊົນກໍ່ສ້າງຂະຫຍາຍສະມາຊິກໃໝ່ ໃຫ້ໄດ້ 90 % ຂອງຈຳນວນມະຫາຊົນ ທີ່ຍັງເຫຼືອໃນປັດຈຸບັນ.

3. ຜ່ານຂະບວນການແຂ່ງຂັນ ຊອກໃຫ້ໄດ້ການຈັດຕັ້ງ-ບຸກຄົນດີເດັ່ນ, ມີຫົວຄິດປະດິດສ້າງ ເພື່ອສົ່ງເສີມ, ບຳລຸງ ກໍ່ສ້າງ, ນຳໃຊ້, ຂະຫຍາຍເຂົ້າພັກ ແລະ ກໍ່ສ້າງພະນັກງານສືບທອດ ໃຫ້ໄດ້ 2 ຄົນຂຶ້ນໄປ ແລະສ້າງພະນັກງານທີ່ມີຕຳແໜ່ງງານເພດຍິງແລະ ເຜົ່າຊົນ.

4. ຄະນະກວດກາ ທຸກຂັ້ນຕ້ອງປະສານສົມທົບ ກັບອົງການພັກ-ລັດ, ອົງການຈັດຕັ້ງມະຫາຊົນຂັ້ນຂອງຕົນ ລົງກວດກາ ຢ່າງໜ້ອຍ 2 ຄັ້ງຕໍ່ປີ ເພື່ອຢັ້ງຢືນ ຄວາມຖືກຕ້ອງ ຂອງ ວຽກງານ ຕ້ານປະກົດການຫຍໍ້ທໍ້ ໃນກົມກອງ ຕ້ານລັດທິເອກະຊົນ, ອາຍາສິດ, ລະເມີດລະບຽບກົດໝາຍເພື່ອເຮັດໃຫ້ການຈັດຕັ້ງ-ບຸກຄົນ ມີຄວາມເຂັ້ມແຂງ ໂປ່ງໃສ ແລະ ມີຄວາມສະຫງົບ ໂດຍພື້ນຖານ.

**ຄ/ ວຽກງານປົກປ້ອງສິດ, ຜົນປະໂຫຍດ, ເຂົ້າຮ່ວມຄຸ້ມຄອງລັດ-ເສດຖະກິດ-ສັງຄົມ ແລະ ປະຕິບັດພັນທະ.**

1.ທຸກຮາກຖານ ຕ້ອງຈັດຕັ້ງຜັນຂະຫຍາຍແຜນການຂອງລັດຂັ້ນຕົນ ເປັນຂໍ້ແຂ່ງຂັນ,ວາງຄາດໝາຍສູ້ຊົນ ໃຫ້ສອດຄ່ອງກັບຂົງເຂດວຽກງານຂອງຕົນ ແລະ ດຳເນີນເຊັນສັນຍາລວມໝູ່-ບຸກຄົນ ກັບ ລັດ, ເຊັ່ນ : ຂົງເຂດ ໂຄງການ, ທຸລະກິດ, ກົມ, ກອງ ແລະ ອື່ນໆ ໃຫ້ໄດ້ 90% ( ເປັນຫຼັກການປະຕິບັດ ).

2. ການຈັດຕັ້ງລັດ, ຫົວໜ່ວຍທຸລະກິດທຸກຂັ້ນ ຕ້ອງຮັບປະກັນສະໜອງຂໍ້ມູນຂ່າວສານ, ແຜນການ ຊັບຊ້ອນພະນັກງານທີ່ມີຄຸນະພາບ, ມີຄວາມຮູ້ຄວາມສາມາດ ເຂົ້າໃນວຽກງານ ແຕ່ລະດ້ານ ຢ່າງເໝາະສົມ ແລະ ນຳໃຊ້ພະນັກງານ ທີ່ຜ່ານຂະບວນການແຂ່ງຂັນ ໃຫ້ໄດ້ 80% .

3. ຫົວໜ່ວຍ ຂັ້ນຕ່າງໆ ແລະ ບຸກຄົນສະມາຊິກ ຕ້ອງນັບຖືຮີດຄອງປະເພນີທີ່ດີ ຂອງແຕ່ລະເຜົ່າຊົນ ຢູ່ແຕ່ລະທ້ອງຖິ່ນ.

4. ຊຸກຍູ້ ອົງການລັດ, ຫົວໜ່ວຍທຸລະກິດ ຈັດຕັ້ງເຂົ້າປະກັນສັງສັງຄົມ ໃຫ້ແກ່ພະນັກງານ ແລະ ນຳພາກວດກາສຸຂະພາບປະຈຳປີ ແລະ ການຮັກສາສະພາບແວດລ້ອມໃຫ້ໄດ້ 80% .

**ງ/ ວຽກງານພັດທະນາຂະແໜງການ ແລະ ເສດຖະກິດຜະລິດສິນຄ້າ.**

1. ການຈັດຕັ້ງ ທຸກຂັ້ນ ຕ້ອງເປັນເຈົ້າການພັດທະນາຕົນເອງ, ວາງແຜນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ ດ້ວຍການເຊັນສັນຍາລວມໝູ່ ກັບການຈັດຕັ້ງຂອງຕົນ ເພື່ອສຳເລັດແຜນການ ຕົວເລກຄາດໝາຍ ທີ່ກະຊວງວາງອອກ.

2. ພະນັກງານທຸກຄົນ ເຂົ້າເປັນສະມາຊິກກອງທຶນກາມະບານ, ກອງທຶນສິນເຊື່ອກະຊວງ ແລະ ກອງທຶນອື່ນໆ ໃຫ້ກວມ 80% ຂອງ ຈຳນວນພົນ ປັດຈຸບັນ (ແຂວງ,ເມືອງ ແລະ ອື່ນໆ).

3. ການຈັດຕັ້ງ ທຸກຂັ້ນຕ້ອງສູ້ຊົນເຮັດທຸລະກິດຫາລາຍໄດ້ເພີ້ມຕາມທ່າແຮງຈຸດພິເສດ ຂອງຕົນ ຕິດພັນກັບເສດຖະກິດຮ່ວມມື, ການຜະລິດເປັນສິນຄ້າຖືກຕ້ອງຕາມລະບຽບກົດໝາຍ.

**ຈ/ ວຽກງານພົວພັນຕ່າງປະເທດ,ຮ່ວມມືສາກົນ:**

1. ທຸກຫົວໜ່ວຍຮາກຖານ ມີການພົວພັນກັບຕ່າງປະເທດ, ບົນຈິດໃຈເປັນເອກະລາດ, ສະເໝີພາບຕ່າງຝ່າຍ ຕ່າງມີຜົນປະໂຫຍດ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ, ຮັກສາໄດ້ຄວາມສາມັກຄີແໜ້ນແຟ້ນ.

2. ເສີມຂະຫຍາຍຮ່ວມມືກັບ ສສ ຫວຽດນາມ, ສປ ຈີນ ແລະ ປະເທດເພື່ອນມິດ ອື່ນໆໃຫ້ມີປະສິດທິຜົນ ດ້ວຍການແລກປ່ຽນຜູ້ແທນ, ບົດຮຽນ, ຢ້ຽມຢາມ ແລະ ນຳໃຊ້ບົດຮຽນຂອງເພື່ອນມາໝູນໃຊ້ໃນຂົງເຂດວຽກງານຂອງຕົນ ໃຫ້ໄດ້ 1-2 ວຽກ.

3. ຈັດຕັ້ງຮ່ວມມືກັບອາຊຽນ ຕາມການຊີ້ນຳຂອງຂັ້ນເທິງ ແລະ ຈັດຕັ້ງປະຕິບັດແຜນການ, ໂຄງການ, ແຜນງານ ບົນພື້ນຖານມີການຈັດຕັ້ງ ຄູ້ມຄອງລວມສູນ, ຍົກລະດັບຂີດຄວາມສາມາດ ຂອງ ຜູ້ເຮັດວຽກດ້ານນີ້ ໃຫ້ໄດ້ 1-2 ຄົນ, ເພື່ອເຊື່ອມໂຍງກັບບັນດາປະເທດຕ່າງໆໃນໂລກ.

**III. ວິທີຈັດຕັ້ງປະຕິບັດ ແລະ ມາຖານການຍ້ອງຍໍ:**

**ກ/ .ວິທີຈັດຕັ້ງປະຕິບັດ:**

1. ການຈັດຕັ້ງ ທຸກຂັ້ນເອກະພາບສູງກັບຄະນະນຳ ທັນເນື້ອໃນແຂ່ງຂັນນີ້ ເປັນແຜນການ ຂອງ ຕົນໃຫ້ລະອຽດ, ຈັດຕັ້ງເຊື່ອມຊຶມ ແລະ ຈັດຕັ້ງດຳເນີນ ເປີດຂະບວນການ ຈັດຕັ້ງປະຕິບັດຂໍ້ແຂ່ງຂັນໃຫ້ຟົດຟື້ນຕໍ່ເໜື່ອງ , ກຳນົດເວລາ 1 ປີ, ເລີ້ມແຕ່ວັນທີ 22/3/2010 ຫາ ວັນທີ 22/3/2011 ເປັນມື້ສະຫຼຸບ.

2. ຄະນະຮັບຜິດຊອບຊີ້ນຳລວມ ຕ້ອງລົງຊີ້ນຳຕິດຕາມ, ຊຸກຍູ້ຂະບວນການ, ເພື່ອຮັບປະກັນຜົນສຳເລັດ

ລື່ນຄາດໝາຍ ທີ່ວາງອອກ ແຕ່ລະຄັ້ງຕ້ອງໄດ້ຕີລາຄາປະເມີນຜົນ, ຖອດຖອນ ບົດຮຽນ,ລາຍງານຂໍຄຳເຫັນຊີ້ນຳ ຈາກຂັ້ນເທິງເປັນປົກະຕິ. ( ແບບເກັບກຳ ຈະສົ່ງໃຫ້ຕາມຫຼັງ)

- ແຜນການແຂ່ງຂັນທຸກຄັ້ງ ຕ້ອງຜ່ານການຢັ້ງຢືນ ຈາກຄະນະນຳຂັ້ນຂອງຕົນ ແລະ ວາງແຜນການກຳນົດ ໄລຍະ1 ປີ, ສຳລັບໂຄງການ ແມ່ນວາງຕາມອາຍຸຂອງສັນຍາ.

- ການຜັນຂະຫຍາຍໃຫ້ອີງໃສ່ວິຊາສະເພາະ, ຄັດເອົາບັນຫາສະເພາະແລ້ວປະກາດຈັດຕັ້ງປະຕິບັດ.

3.ຄະນະຊີ້ນຳລວມ ຂັ້ນກະຊວງ: ມີຄະນະພັກກະຊວງ, ຜູ້ຊີ້ນຳອົງການຈັດຕັ້ງມະຫາຊົນ, ປະທານກຳມະບານກະຊວງ, ຮອງຫົວໜ້າກົມຈັດຕັ້ງ, ຮອງຫົວໜ້າກົມກວດກາ, ຮອງກົມແຜນການ ແລະ ການຮ່ວມມື ແລະ ຮອງຫົວໜ້າຫ້ອງການກະຊວງ ແລະ ອະນຸກຳມະການຊຸກຍູ້ຈັດຕັ້ງປະຕິບັດຕົວຈິງມີ: ປະທານກຳມະບານກະຊວງ, ຫົວໜ້າຫ້ອງການພັກ, ຫົວໜ້າພະແນກນະໂຍບາຍ-ຍ້ອງຍໍ ກົມຈັດຕັ້ງ ແລະ ຫົວໜ້າພະແນກບໍລິຫານ ຫ້ອງການກະຊວງ ຍທຂ.

**ຂ/ ມາດຕະຖານເງື່ອນໄຂຍ້ອງຍໍ ປະເພດລວມໝູ່ກົມກອງ:**

**1.ປະເພດ I.**

ຮາກຖານ ທີ່ປະຕິບັດໄດ້ຄົບຖ້ວນ ຕາມເນື້ອໃນຂໍ້ແຂ່ງຂັນ ຕິດພັນກັບໜ້າທີ່ການເມືອງຂອງຕົນບັນລຸໄດ້ ຫຼື ລື່ນຄາດໝາຍໂດຍປະດິດສ້າງມີຄຸນະພາບດີບໍ່ຫຼຸດ 90 % ຈະໄດ້ຮັບທຸງໄຊຂອງ ລັດຖະມົນຕີວ່າການພ້ອມໃບຍ້ອງຍໍກະຊວງ ຍທຂ ແລະເງິນສົດ 8 ລ້ານກີບ.

**2 ປະເພດ II.**

ຮາກຖານທີ່ປະຕິບັດໄດ້ເນື້ອໃນຂໍ້ແຂ່ງຂັນຄົບຖ້ວນ ດ້ວຍຄຸນນະພາບດີບໍ່ຫຼຸດ 80%,ຂື້ນໄປຈະໄດ້ຮັບໃບຍ້ອງຍໍ ກະຊວງ ຍທຂ ແລະ ເງິນສົດ ບໍ່ຕ່ຳກວ່າ 5 ລ້ານກີບ.

**3 ປະເພດ III**

ຮາກຖານປະຕິບັດໄດ້ເນື້ອໃນຂໍ້ແຂ່ງຂັນໃນລະຫ່ວາງ 60-70% ຈະໄດ້ຮັບໃບຊົມເຊີຍ ຂອງກະຊວງ ແລະ ເງິນສົດບໍ່ຕ່ຳກ່ວາ 2 ລ້ານກີບ.

**3/.ມາດຕະຖານເງື່ອນໄຂຍ້ອງຍໍ ປະເພດບຸກຄົນປະຈຳປີ:**

**1. ປະເພດ I.**

ຕ້ອງແມ່ນຜູ້ມີແນວຄິດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດດີ, ເປັນແບບຢ່າງບໍ່ຄອນແຄນ, ຜ່ານຜ່າທຸກອຸປະສັກ ຂໍ້ຫຍຸ້ງຍາກຕ່າງໆ ມີຄວາມດຸໝັ່ນຂະຫຍັນພຽນ, ຕື່ນຕົວ, ຫ້າວຫັນເຮັດສຳເລັດໜ້າທີ່ຂອງພັກ-ລັດມອບໝາຍໃຫ້ ແລະ ເນື້ອໃນຂໍ້ແຂ່ງຂັນ ຂອງ ຮາກຖານ ຢ່າງປະດິດສ້າງ ແລະ ມີຄຸນນະ

ພາບດີ, ເປັນບົດຮຽນໃຫ້ໝູ່ຄູ່ຮ່ຳຮຽນນຳ, ປະຢັດທຶນຮອນ, ພະລັງງານ ມີມູນຄ່າ ແຕ່ 30 ລ້ານກີບ ຂຶ້ນເມືອ, ເຂົ້າຮ່ວມດຳເນີນຊີວິດເປັນປົກກະຕິ, ເອົາໃຈໃສ່ປະກອບຄຳຄິດ ຄຳເຫັນ, ເຂົ້າຮ່ວມປັບປຸງ, ຂະຫຍາຍການຈັດຕັ້ງໃນຂັ້ນຂອງຕົນ ໃຫ້ເຂັ້ມແຂງໜັກແໜ້ນ.

- ເອົາໃຈໃສ່ຮ່ຳຮຽນດ້ວຍຕົນເອງ, ນຳໝູ່ຄູ່ , ການຈັດຕັ້ງ ຍົກລະດັບຄວາມສາມາດໃຫ້ສູງຂຶ້ນເລື້ອຍໆ.
- ມີຄວາມສາມັກຄີຊ່ວຍເຫຼືອໃນໝູ່ພະນັກງານ,ປະຊາຊົນ ແລະ ສາກົນຖືກຕາມແນວທາງ ແລະໄດ້ຮັບຄວາມໄວ້ວາງໃຈຈາກມະຫາຊົນເປັນຈຳນວນຫຼາຍ.
- ເປັນເຈົ້າການຕ້ອບຕ້ານກົນອຸບາຍ ຂອງສັດຕູໃນທຸກກໍລະນີ, ຕົນເອງແລະຄອບຄົວ ບໍ່ໃຫ້ເກີດມີປະກົດການຫຍໍ້ທໍ້ໃນສັງຄົມແລະມີຄວາມໂປ່ງໃສແມ່ນຈະໄດ້ໃບຍ້ອງຍໍຂອງກະຊວງພ້ອມເງິນສົດບໍ່ຕ່ຳກ່ວາ 8 ແສນກີບ

**2.ປະເພດ II.**

ຕ້ອງແມ່ນຜູ້ມີແນວຄິດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດດີ, ເຮັດສຳເລັດໜ້າທີ່ຂອງພັກລັດ ແລະ ກຳມະບານ ມອບໝາຍໃຫ້ດ້ວຍຄຸນະພາບດີ; ເອົາໃຈໃສ່ປະກອບຄຳຄິດຄຳເຫັນ, ເຂົ້າຮ່ວມປັບປຸງ ,ຂະຫຽາຍການຈັດຕັ້ງໃນຂັ້ນຂອງຕົນ ໃຫ້ໜັກແໜ້ນເຂັ້ມແຂງ.

- ເອົາໃຈໃສ່ຮ່ຳຮຽນດ້ວຍຕົນເອງ ,ນຳໝູ່ຄູ່ ແລະ ການຈັດຕັ້ງ.
- ມີສະຕິຕໍ່ກົນອຸບາຍ ຂອງ ສັດຕູ ບໍ່ມີປະກົດການຫຍໍ້ທໍ້ເກີດຂຶ້ນ, ມີຄວາມສາມັກຄີພາຍໃນ-ພາຍນອກດີແມ່ນຈະໄດ້ຮັບໃບຍ້ອງຍໍ ຂອງ ກະຊວງພ້ອມດ້ວຍເງິນສົດບໍ່ຕ່ຳກ່ວາ 5 ແສນກີບ

**3.ປະເພດ III.**

- ຕ້ອງແມ່ນຜູ້ມີແນວຄິດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດດີ, ເຮັດຫຼ້ອນໜ້າທີ່ຂອງພັກລັດ ແລະ ກຳມະບານ ຕາມການມອບໝາຍ ແບບປະຕິບັດຄຳສັ່ງເປັນສ່ວນໃຫຍ່
- ມີຄວາມສາມັກຄີກັບໝູ່ເພື່ອນ.

+ ມີສະຕິຕໍ່ການຈັດຕັ້ງຕ້ານ ແລະ ສະກັດກັ້ນກົນອຸບາຍຂອງສັດຕູ ໃນທຸກກໍລະນີຢ່າງເຂັ້ມງວດ ແມ່ນຈະໄດ້ຮັບໃບຍ້ອງຍໍກົມກອງຂັ້ນ ຂອງ ຕົນພ້ອມເງິນສົດບໍ່ຕ່ຳກ່ວາ 1 ແສນກີບ

**ໝາຍເຫດ:** ເງິນຍ້ອງຍໍ ແມ່ນໃຫ້ນຳໃຊ້ຮ່ວງບໍລິຫານແຕ່ລະຂົງເຂດ: ໂຄງການ, ທຸລະກິດ, ຂົງເຂດລັດບໍລິຫານວິຊາການແມ່ນໃຫ້ໃຊ້ຮ່ວງບໍລິຫານຫ້ອງການ ກະຊວງ,ສ່ວນ ຍທຂແຂວງ,ເມືອງແມ່ນໃຊ້ນຳພະແນກຍທຂ.

ລັດຖະມົນຕີວ່າການ ປະທານ ສບ ກະຊວງ ຍທຂ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ ເລກທີ /ຍທຂ

ນະຄອນຫຼວງວຽງຈັນ, ວັນທີ

# ຂໍ້ຕົກລົງ

## ວ່າດ້ວຍ:ການແຕ່ງຕັ້ງຄະນະຮັບຜິດຊອບ ແລະ ອະນຸກຳມະການ ຈັດຕັ້ງປະຕິບັດຂະບວນການແຂ່ງຂັນ ຂອງ ສະຫະພັນກຳມະບານກະຊວງ ຍທຂ

- ອີງຕາມແຜນການຈັດຕັ້ງຂະບວນການແຂ່ງຂັນ ປະຕິບັດທິດທາງແຜນການກອງປະຊຸມ ຍທຂ ທົ່ວປະເທດ ປີ 2010 ເລກທີ 019 / ສບ.ກຊ, ວັນທີ 01/03/2010.
- ອີງຕາມ ການນຳສະເໜີ ຂອງ ກຳມະບານກະຊວງ ແລະ ຄວາມເປັນເອກະພາບ ກອງປະຊຸມ ຍທຂ ທົ່ວປະເທດ 2010
- ອີງໃສ່ ການຄົ້ນຄ້ວາ ແລະ ເຫັນດີ ເປັນເອກະພາບ ຂອງ ຄະນະນຳ ກະຊວງ

ລັດຖະມົນຕີວ່າການ ກະຊວງໂຍທາທິການ ແລະ ຂົນສົ່ງ ຕົກລົງ:

ມາດຕາ 1 : ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມ ປະກອບດ້ວຍ:

1. ທ່ານ ນ. ວິໄລຄຳ ໂພສາລາດ ຄະພັກກະຊວງ ຜູ້ຊີ້ນຳອົງການຈັດຕັ້ງມະຫາຊົນ ເປັນຫົວໜ້າ ຄະນະ
2. ທ່ານ ສີຍາ ຈັນມະນີ ປະທານ ສະຫະພັນ ກຳມະບານ ກະຊວງ ຍທຂເປັນ ຮອງ ຫົວໜ້າ ຄະນະ
3. ທ່ານ ຂັນເງິນ ຄຳວົງສາ ຮອງ ຫົວໜ້າຫ້ອງການກະຊວງ ເປັນຄະນະ
4. ທ່ານ ລັ່ນ ແສງອາພອນ ເລຂາຄະນະພັກ , ຮອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ເປັນ ຄະນະ
5. ທ່ານ ຈັນຕຸລາ ພະລານະລາສີ ຮອງຫົວໜ້າ ກົມກວດກາ ເປັນຄະນະ.

* ຄະນະດັ່ງກ່າວ ມີໜ້າທີ່ຊີ້ນຳ-ນຳພາໂຄສະນາ, ຕິດຕາມ,ຊຸກຍູ້ການຈັດຕັ້ງເຄື່ອນໄຫວຂໍ້ແຂ່ງຂັນໃຫ້ມີຂະບວນການຕໍ່ເໜື່ອງ ແລະ ຕັດສິນບັນຫາ.

ມາດຕາ 2: ຕົກລົງແຕ່ງຕັ້ງ ອະນຸກຳມະການຊຸກຍູ້, ກວດກາ ການຈັດຕັ້ງເຄື່ອນໄຫວປະກອບດ້ວຍ:

1. ທ່ານ ສີຍາ ຈັນມະນີ ປະທານ ກຳມະບານກະຊວງ ເປັນຫົວໜ້າ ຄະນະ
2. ທ່ານ ແສງດາວວີ ກັດຕິຍະສັກ ຫົວໜ້າພະແນກຫ້ອງການພັກ ເປັນຮອງ ຫົວໜ້າ ຄະນະ.
3. ທ່ານ ທ່ານ ຄຳທອງ ບຸດຕີຈັກ ຫົວໜ້າພະແນກ ນະໂຍບາຍ-ຍ້ອງຍໍ ເປັນຄະນະ

4. ທ່ານ ພູແກ້ວ ທຳມະວົງ ຫົວໜ້າພະແນກບໍລິຫານຫ້ອງການກະຊວງ ເປັນຄະນະ

* ຄະນະດັ່ງກ່າວ ມີໜ້າທີ່ ຂື້ນແຜນການເຄື່ອນໄຫວໂຄສະນາ, ນຳພາ, ຕິດຕາມ, ຊຸກຍູ້ ປະເມີນຜົນ, ກວດກາ ການຈັດຕັ້ງປະຕິບັດຂໍ້ແຂ່ງຂັນເປັນໄລຍະແລະ ປະສານກັບຮາກຖານ ທີ່ໄດ້ຂື້ນທະບຽນແຂ່ງຂັນແນ່ໃສ່ ຜັນຂະຫຍາຍໄປຮາກຖານ ທີ່ມີເງື່ອນໄຂ ແລະ ລາຍງານໃຫ້ຂັ້ນເທິງ ທີ່ເປັນສາຍຕັ້ງ, ສາຍຂວາງຂອງຕົນເປັນປົກກະຕິ.

ມາດຕາ 3: ການໃຊ້ຈ່າຍຕ່າງໆແມ່ນໃຫ້ນຳໃຊ້ງົບປະມານ ບໍລິຫານຫ້ອງການ ກະຊວງ ຍທຂ

ມາດຕາ 4: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ລັດຖະມົນຕີວ່າການ